# ບົດຂ່າວ

## ຄະນະຜູ້ແທນລັດຖະບານເດີນທາງໄປເຈນນີວາເພື່ອເຂົ້າຮ່ວມການທົບທວນຂອງອົງການສະຫະປະຊາຊາດກ່ຽວກັບສິດທິຂອງຄົນທີ່ມີຄວາມພິການຢູ່ໃນ ສປປ ລາວ



*ຄະນະຜູ້ແທນລັດຖະບານ, ນຳໂດຍພະນະທ່ານ ປະເດີມພອນ ສິນທະນີ, ຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ພ້ອມດ້ວຍທີມງານ ອົງການສະຫະປະຊາຊາດ ເພື່ອການພັດທະນາປະຈຳລາວ ທີ່ມີຮູບພາບແກະສະຫຼັກປະຫວັດຄວາມເປັນມາຂອງເຈົ້າຊາຍມາຕູລີ ທີ່ຊົງປະທັບເທິງກວຽນທີ່ມີສຸພັນນະຫົງນຳທາງ ເຊິ່ງເປັນສັນຍາລັກການບິນຂອງ ສປປ ລາວ ເປັນສາກຫຼັງ, ທີ່ສະໜາມບິນສາກົນວັດໄຕ.*

***ຮູບຖ່າຍໂດຍ:*** *ສິນສະຫວັນ ສອນປະເສີດ, ອົງການສະຫະປະຊາຊາດເພື່ອການພັດທະນາ ປະຈຳລາວ*

**ທີ່ນະຄອນຫຼວງວຽງຈັນ, ວັນທີ 25 ສິງຫາ 2022 -** ຄະນະຜູ້ແທນລັດຖະບານ, ນຳໂດຍ ພະນະ ທ່ານ ປະເດີມພອນ ສິນທະນີ, ຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫັວດດີການສັງຄົມ, ອອກເດີນທາງຈາກສະໜາມບິນສາກົນວັດໄຕໄປເຈນນີວາ, ປະເທດສະວິດເຊີແລນ, ເພື່ອເຂົ້າຮ່ວມການທົບທວນຄັ້ງທຳອິດກ່ຽວກັບສະຖານະການຂອງຄົນທີ່ມີຄວາມພິການຢູ່ໃນ ສປປ ລາວໂດຍຄະນະກຳມະການຂອງອົງການສະຫະປະຊາຊາດ ວ່າດ້ວຍສິດຂອງຄົນທີ່ມີຄວາມພິການ, ເຊິ່ງໄດ້ກຳນົດໃນວັນທີ 29-30 ສິງຫາ 2022.

ສປປ ລາວ ເປັນປະເທດທີ່ສາມໃນອາຊຽນທີ່ໄດ້ໃຫ້ສັດຕະຍາບັນສົນທິສັນຍາ ວ່າດ້ວຍສິດຂອງຄົນທີ່ມີຄວາມພິການໃນປີ 2009. ພາຍໃຕ້ສົນທິສັນຍາ, ລັດຖະບານແຫ່ງສປປ ລາວ ຈະຕ້ອງໄດ້ຮັບການທົບທວນຢ່າງສະໝ່ຳສະເໝີໂດຍ

ຄະນະກຳມະການຜູ້ຊ່ຽວຊານ 18 ທ່ານຢູ່ອົງການສະຫະປະຊາຊາດທີ່ເຈນີວາກ່ຽວກັບການຈັດຕັ້ງປະຕິບັດຂອງສົນທິສັນຍາ.

ພາຍໃຕ້ການທົບທວນຄັ້ງທຳອິດຂອງ ສປປ ລາວ, ຄະນະກຳມະການຜູ້ຊ່ຽວຊານຂອງອົງການສະຫະປະຊາຊາດຈະດຳເນີນການສົນທະນາກັບຄະນະຜູ້ແທນລັດຖະບານກ່ຽວກັບປະເດັນຕ່າງໆ, ລວມທັງການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການໃນການຕັດສິນໃຈ, ການເຂົ້າເຖິງການສຶກສາຂອງເຂົາເຈົ້າ, ສຸຂະພາບ, ການຈ້າງງານ ແລະ ຄວາມຍຸຕິທຳ, ເຊັ່ນດຽວກັນກັບການປົກປ້ອງຈາກການຈຳແນກ ແລະ ຄວາມຮຸນແຮງ. ການສົນທະນາແມ່ນຈະອີງຕາມຂໍ້ມູນທີ່ລັດຖະບານໄດ້ລາຍງານ ([bit.ly/LaoGovt-CRPDReport](bit.ly/LaoGovt-CRPDReport)), ພ້ອມກັບບົດລາຍງານຄູ່ຂະໜານຂອງເຄືອຂ່າຍອົງການຈັດຕັ້ງຂອງຄົນທີ່ມີຄວາມພິການ ([bit.ly/LaoOPDs-CRPDReport](bit.ly/LaoOPDs-CRPDReport)) ແລະ ອົງການສະຫະປະຊາຊາດຢູ່ໃນ ສປປ ລາວ ([bit.ly/LaoUNCT-CRPDReport](bit.ly/LaoUNCT-CRPDReport)).

ຄະນະຜູ້ແທນລັດຖະບານຕາງໜ້າໂດຍ ກະຊວງແຮງງານ ແລະ ສະຫັວດດີການສັງຄົມ, ກະຊວງສຶກສາ ແລະ ກິລາ, ກະຊວງສາທາລະນະສຸກ, ກະຊວງຍຸຕິທຳ, ຄະນະກຳມະການແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ, ຄະນະກຳມະການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ແລະ ກະຊວງການຕ່າງປະເທດ. ການມີສ່ວນຮ່ວມຂອງ ສປປ ລາວ ໃນການທົບທວນແມ່ນໄດ້ຮັບການສະໜັບສະໜູນຈາກອົງການ UNDP, UNICEF, OHCHR, ປະເທດອົດສະຕາລີ, ປະເທດໄອແລນ, ອົງການເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ, ແລະ ອົງການ Christian Blind Mission (CBM Global).

"ສປປ ລາວ ມີຄວາມມຸ່ງໝັ້ນໃນການສົ່ງເສີມ ແລະ ປົກປ້ອງສິດຂອງຄົນທີ່ມີຄວາມພິການ. ພ້ອມກັບການສະໜັບສະໜູນຈາກຜູ້ໃຫ້ທຶນຫຼັກ, ຄະນະຜູ້ແທນທີ່ຕາງໜ້າບັນດາກະຊວງຫຼັກຈະເດີນທາງເຂົ້າຮ່ວມການທົບທວນໂດຍຄະນະກຳມະການຜູ້ຊ່ຽວຊານຂອງອົງການສະຫະປະຊາດ ເພື່ອໂອ້ລົມກ່ຽວກັບຄວາມຄືບໜ້າ ແລະ ສິ່ງທ້າທາຍຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ," ພະນະ ທ່ານ ປະເດີມພອນ ສິນທະນີ ໄດ້ໃຫ້ຄຳເຫັນວ່າ. "ພາຍຫຼັງການທົບທວນ, ພວກເຮົາຈະສືບຕໍ່ປະສານງານທົ່ວລັດຖະບານເພື່ອເຊື່ອມສານວຽກງານການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ."

ພາຍຫຼັງການທົບທວນ, ຄະນະກຳມະການຜູ້ຊ່ຽວຊານຂອງອົງການສະຫະປະຊາຊາດຈະໃຫ້ຂໍ້ສັງເກດການ ແລະ ຂໍ້ສະເໜີແນະແກ່ລັດຖະບານແຫ່ງ ສປປ ລາວ ເພື່ອຈັດຕັ້ງປະຕິບັດກ່ອນການທົບທວນຄັ້ງຕໍ່ໄປໃນອີກສີ່ປີຕໍ່ໜ້າ. ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດບັນດາຂໍ້ສະເໜີແນະຕ່າງໆ, ອົງການ UNDP ຈະເຮັດວຽກຮ່ວມກັບບັນດາກະຊວງ ແລະ ອົງການຈັດຕັ້ງຂອງຄົນທີ່ຄວາມພິການເພື່ອສ້າງແຜນປະຕິບັດງານແຫ່ງຊາດໃນການຈັດຕັ້ງປະຕິບັດພາຍໃຕ້ສົນທິສັນຍາວ່າດ້ວຍສິດຂອງຄົນທີ່ມີຄວາມພິການ.

*ຂໍ້ມູນເພີ່ມເຕີມກ່ຽວກັບການທົບທວນຄັ້ງທຳອິດຂອງ ສປປ ລາວ, ລວມທັງບົດລາຍງານຂອງລັດຖະບານ ແລະ ບົດລາຍງານຄູ່ຂະໜານ ແມ່ນໄດ້ອັບໂລດໃນເວັບໄຊ໋ຂອງ OHCHR ນີ້ ([bit.ly/LaoPDR-CRPDReview](bit.ly/LaoPDR-CRPDReview)). ການສົນທະນາລະຫ່ວາງຄະນະຜູ້ແທນລັດຖະບານ ແລະ ຄະນະກຳມະການຜູ້ຊ່ຽວຊານຂອງອົງການສະຫະປະຊາຊາດ ຈະ*

*ເປີດໃຫ້ສາທາລະນະໄດ້ຮັບຊົມ ແລະ ຈະອອກອາກາດໃນ UN Web TV (bit.ly/CRPD-UNWebTV) ແລະ ແຟັກບຸກຂອງ UNDP ປະຈໍາ ສປປ ລາວ (facebook.com/UNDPLaoPDR).*

---

**ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:**

ທ່ານ ນາງ ອັກສອນທິບ ສົມວໍລະຈິດ
ຫົວໜ້າໜ່ວຍງານການສື່ສານຂອງ UNDP
aksonethip.somvorachit@undp.org

ທ່ານ ນາງ ສິນສະຫວັນ ສອນປະເສີດ
ພະນັກງານການສື່ສານ ແລະ ປະຊາສໍາພັນສໍາລັບການປົກຄອງຂອງ UNDP
sinsavanh.sonepaseuth@undp.org